# ການອົບຮົມ
# "ຕາມຢ່າງພຣະເຢຊູ"

ບົດຮຽນຂອງຜູ້ຮຽນ

## ການສ້າງສາວົກເບື້ອງຕົ້ນ

...ສ້າງສາວົກໃຫ້ຢູ່ໃນກະແສການຕັ້ງຄຣິດສຕ໌ຈັກ...

ດານຽນ ບີ ແລນຄາສເຕີ

ດັບເບີ້ນຢູ ໄອ ຈີ ເທຄ

ບົດຮຽນຂອງຜູ້ຮຽນ

ບົດຮຽນທີ 1

ສັນລະເສີນ

**ບົດນຳ**

1. ໃຜແມ່ນຜູ້ອົບຮົມ?

2. ໃຜແມ່ນຜູ້ເຂົ້າອົບຮົມ?

3. ພຣະເຢຊູຊົງເປັນຜູ້ໃດ?

4. ຮ້ານກາເຟເປີດແລ້ວ!

**ລູກາ 7:31-35**

ເຫດສັນນັ້ນເຮົາຈະປຽບຄົນສມັຍນີ້ກັບອັນໃດ ແລະເຂົາເປັນເໝືອນກັບອັນໃດ. ປຽບເໝືອນກັບໝູ່ເດັກນ້ອຍທີ່ນັ່ງຢູ່ກາງຕລາດຮ້ອງໃສ່ກັນວ່າ ຕູໄດ້ເປົ່າປີ່ໃຫ້ສູ ແຕ່ສູບໍ່ຟ້ອນລຳ ຕູໄດ້ຮ້ອງໄຫ້ຮ່ຳໄຮ ແຕ່ສູບໍ່ໄດ້ຕີອົກຕ້ອນຮັບ ເພາະໂຢຮັນບັບຕິສະໂຕໄດ້ມາ ກໍບໍ່ ກິນເຂົ້າຫລືດື່ມເຫລົ້າແວງ ແລະພວກທ່ານເວົ້າວ່າ ມີຜີສິງຢູ່ ສ່ວນບຸດມະນຸດໄດ້ມາທັງ ກິນທັງດື່ມ ແລະພວກທ່ານເວົ້າວ່າ ເບິ່ງແມ ນີ້ເປັນຄົນກິນເກີນສ່ວນແລະມັກເມົາ. ເປັນເພື່ອນຂອງຄົນເກັບພາສີແລະຄົນນອກສິນທັມ ແຕ່ພຣະປັນຍາກໍປະກົດວ່າຖືກຕ້ອງແລ້ວໂດຍບັນດາຜົນຂອງພຣະປັນຍານັ້ນ



**ການທະວີຄູນ**

**ສັນລະເສີນ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ມັດທາຍ 6:20-21**

ແຕ່ຈົ່ງຮິບໂຮມຊັບສົມບັດສຳລັບຕົນໄວ້ໃນສວັນ ບ່ອນມອດແລະຂີ້ໝ້ຽງກັດກີນບໍ່ໄດ້ ແລະທັງໂຈນເຈາະແລະລັກເອົາບໍ່ໄດ້ ເພາະວ່າຊັບສົມບັດຂອງທ່ານຢູ່ທີ່ໃດໃຈຂອງທ່ານກໍຢູ່ທີ່ນັ້ນດ້ວຍ

**- ສາມສິ່ງທີ່ຜູ້ອາລັກຂາຄວນເຮັດມີຫຍັງແດ່?**

**ມັດທາຍ 25:14-28**

ແລະຍັງປຽບເໝືອນຊາຍຜູ້ນຶ່ງກຳລັງຈະອອກເດີນທາງໄປ ຈຶ່ງເອີ້ນພວກຂ້ອຍໃຊ້ຂອງຕົນມາຝາກຊັບສົມບັດໄວ້ກັບເຂົາ ຄົນນຶ່ງເພິ່ນໃຫ້ເງິນຫ້າຕາລັນຕົນ, ຄົນນຶ່ງສອງຕາລັນຕົນ, ແລະອີກຄົນນຶ່ງຕາລັນຕົນດຽວ ຕາມຄວາມສາມາດຂອງແຕ່ລະຄົນ ແລ້ວກໍອອກເດີນທາງໄປ. ຜູ້ທີ່ໄດ້ຮັບຫ້າຕາລັນຕົນກໍເອົາເງິນນັ້ນໄປຄ້າຂາຍທັນທີ ໄດ້ກຳໄລເທົ່າຕົວ. ຄົນທີ່ໄດ້ຮັບສອງຕາລັນຕົນກໍໄດ້ກຳໄລເທົ່າຕົວເໝືອນກັນ. ແຕ່ຜູ້ທີ່ໄດ້ຮັບຕາລັນຕົນດຽວ ກໍໄດ້ໄປຂຸດຂຸມແລ້ວເຊື່ອງເງິນນາຍໄວ້. ຢູ່ດົນນານຕໍ່ມານາຍຂອງຂ້ອຍໃຊ້ເຫລົ່ານັ້ນກໍກັບມາຄິດບັນຊີກັບເຂົາ ຜູ້ທີ່ໄດຮັບເງິນຫ້າຕາລັນຕົນ ກໍເອົາເງິນຫ້າຕາລັນຕົນມາແຈ້ງວ່າ ນາຍເອີຍ, ນາຍໄດ້ຝາກເງິນຫ້າຕາລັນຕົນໄວ້ກັບຂ້ານ້ອຍ ນີ້ແຫລະ, ຂ້ານ້ອຍໄດ້ກຳໄລຕື່ມອີກຫ້າຕາລັນຕົນ ຝ່າຍນາຍກໍຕອບວ່າ ດີແລ້ວ ຂ້ອຍໃຊ້ຜູ້ດີແລະຊັດຊື່ເອີຍ ເຈົ້າເປັນຜູ້ສັດຊື່ໃນຂອງເລັກນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າເທີນ ຜູ້ທີ່ໄດ້ຮັບສອງຕາລັນຕົນນັ້ນໄດ້ເຂົ້າມາເໝືອນກັນແຈ້ງວ່າ ນາຍເອີຍ, ນາຍໄດ້ຝາກເງິນສອງຕາລັນຕົນໄວ້ນຳຂ້ານ້ອຍນີ້ແຫລະ ຂ້ານ້ອຍໄດ້ກຳໄລອີກສອງຕາລັນຕົນ ຝ່າຍນາຍກໍຕອບວ່າ ດີແລ້ວ ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ ເຈົ້າເປັນຜູ້ສັດຊື່ໃນຂອງເລັກນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງ ຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າເທີນ ສ່ວນຜູ້ທີ່ໄດ້ຮັບຕາລັນຕົນດຽວນັ້ນກໍໄດ້ເຂົ້າມາຄືກັນແຈ້ງວ່າ ນາຍເອີຍ ຂ້ານ້ອຍຮູ້ຈັກທ່ານແລ້ວວ່າທ່ານເປັນຄົນໃຈແຂງ, ເຄີຍກ່ຽວຜົນບ່ອນຕົນບໍ່ໄດ້ຫວ່ານ, ແລະແລະຮິບໂຮມເອົາບ່ອນຕົນບໍ່ໄດ້ຝັດ. ຂ້ານ້ອຍຢ້ານຈຶ່ງໄດ້ເອົາເງິນຕາລັນຕົນຂອງທ່ານໄປເຊື່ອງໄວ້ໃຕ້ພື້ນດິນ ນີ້ແຫລະ, ສິ່ງທີ່ເປັນຂອງທ່ານກໍໄດ້ແລ້ວ. ນາຍຈຶ່ງຕອບວ່າ ອ້າຍຂ້ອຍໃຊ້ຊົ່ວແລະຂີ້ຄ້ານເຮີຍ ໂຕຮູ້ຫລືວ່າເຮົາເຄີຍເກັບຜົນບ່ອນເຮົາບໍ່ໄດ້ຫວ່ານ ແລະຮິບໂຮມເອົາບ່ອນບໍ່ໄດ້ຝັດ ຖ້າຢ່າງນັ້ນ ໂຕຄວນຈະເອົາເງິນຂອງເຮົາໄປຝາກໄວ້ກັບທະນາຄານ ແລະເມື່ອເຮົາກັບມາກໍຈະໄດ້ຮັບ ສິ່ງທີ່ເປັນຂອງເຮົາກັບຄອອກເບັ້ງ

1. ຜູ້ອາລັກຂາ__________________

2. ຜູ້ອາລັກຂາ_________________
3. ຜູ້ອາລັກຂາ_________________

**- ຄຳສັ່ງທຳອິດທີ່ພຣະເຈົ້າຊົງໃຫ້ມະນຸດໄວ້ຄືຫຍັງ?**

**ປະຖົມມະການ 1:28**

ແລ້ວກໍອວຍໄຊໃຫ້ພວກເຂົາວ່າ ຈົ່ງມີລູກເຕົ້າໃຫ້ມາກຫລາຍ ເພື່ອເຊື້ອສາຍຂອງເຈົ້າຈະມີຢູ່ທົ່ວທຸກແຫ່ງຫົນແລະປົກຄອງທຸກສິ່ງເທິງແຜ່ນດິນໂລກນີ້ ເຮົາໃຫ້ເຈົ້າມີອຳນາດເໜືອປາ, ນົກ, ແລະສັດປ່າທຸກຊະນິດ.

**- ຄຳສັ່ງສຸດທ້າຍທີ່ພຣະເຢຊູຊົງໃຫ້ມະນຸດໄວ້ຄືຫຍັງ?**

**ມາຣະໂກ 16:15**

ຝ່າຍພຣະອົງຊົງສັ່ງພວກເຂົາວ່າ, " ທ່ານທັງຫລາຍຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸສໂລກທັງໝົດ

**- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?**

**2 ຕີໂມທຽວ 2:2**

ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ຫນ້າພຍານທັງຫລາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ

**ທະເລສາບຄາລີເລ / ທະເລຕາຍ**



ຂໍ້ພຣະຄໍາພີທ່ອງຈໍາ

ໂຢຮັນ 5:18

ໃນການນີ້ແຫລະ, ພຣະບິດາຂອງເຮົາໄດ້ຊົງຮັບກຽດຕິຍົດ ຄືເມື່ອພວກທ່ານເກີດຜົນຫລາຍ ພວກທ່ານຈຶ່ງເປັນສາວົກຂອງເຮົາ

ການອົບຮົມພາກປະຕິບັດ

ຈົບບົດຮຽນ

## ບົດຮຽນທີ 3

## ຄວາມຮັກ

**ສັນລະເສີນ**

**ອະທິຖານ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ມາຣະໂກ 6:34**

ຄັນພຣະເຢຊູສະເດັດຂຶ້ນຈາກເຮືອແລ້ວ ກໍຊົງເຫັນປະຊາຊົນໝູ່ໃຫຍ່ ແລະຊົງສົງສານເຂົາ ເພາະວ່າເຂົາເປັນເໝືອນຝູງແກະທີ່ບໍ່ມີຜູ້ລ້ຽງ ພຣະອົງຈຶ່ງຊົງຕັ້ງຕົ້ນສັ່ງສອນເຂົາເປັນຫລາຍຂໍ້ຫລາຍປະການ

**- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແດ່?**

**ເພງສັນລະເສີນ 23:1-6**

ພຣະຜູ້ເປັນເຈົ້າເປັນຜູ້ລ້ຽງຂ້າພຣະອົງ ຂ້າພຣະອົງມີທຸກສິ່ງທີ່ຕ້ອງການ ພຣະອົງໃຫ້ພັກເຊົາຢູ່ໃນທົ່ງຫຍ້າຂຽວສົດ ແລະນຳໄປຍັງແດນທີ່ມີບໍ່ນ້ຳອັນສົດໃສ ພຣະອົງໃຫ້ມີແຮງຂຶ້ນໃຫມ່ ພຣະອົງນຳພາໄປໃນທາງອັນຊອບທັມຕາມທີ່ຊົງໄດ້ສັນຍາໄວ້ ຂ້າແດ່ພຣະຜູ້ເປັນເຈົ້າເອີຍ ເຖິງຜ່ານຮ່ອມອັນມືດຫນາກໍຈະບໍ່ຢ້ານກົວເພາະພຣະອົງຢູ່ກັບຂ້າພຣະອົງ ໄມ້ຄ້ອນແລະໄມ້ເທົ້າຂອງພຣະອົງກໍປົກປ້ອງຂ້າພຣະອົງໃຫ້ພົ້ນໄພ ພຣະອົງຈັດງານລ້ຽງໃຫຍ່ສຳລັບຂ້າພຣະອົງ ບ່ອນທີ່ສັດຕູທັງໝົດເຫັນຂ້າພຣະອົງໄດ້ ພຣະອົງຕ້ອນຮັບຂ້າພຣະອົງດັ່ງແຂກຜູ້ສຳຄັນຫລາຍ ແລະຈອກຂ້າພຣະອົງກໍເຕັມລົ້ນໄຫລຢູ່ ແທ້ແຫລ້ວ ພຣະຄຸນຄວາມດີກັບຄວາມຮັກອັນຍິ່ງໃຫຍ່ຈະປະດັບຂ້າພຣະອົງໄວ້ຕະຫລອດໄປ ແລະພຣະວິຫານກໍຈະເປັນເໝືອນເຮືອນຂ້າພຣະອົງຢູ່ຈົນຊີວິດຂອງຂ້າພຣະອົງນັ້ນສິ້ນໄປ

1. ຜູ້ລ້ຽງ________________________
2. ຜູ້ລ້ຽງ________________________
3. ຜູ້ລ້ຽງ________________________

**- ຄຳສັ່ງສຳຄັນທີ່ສຸດເພື່ອສອນຜູ້ອື່ນຄືຫຍັງ?**

**ມາຣະໂກ 12:28-31**

ມີນັກທັມຄົນນຶ່ງເມື່ອເຂົາມາເຖິງໄດ້ຍິນເຂົາໂຕ້ຖາມກັນຢູ່ ແລະທັງເຫັນວ່າ ພຣະອົງຊົງຕອບເຂົາໄດ້ດີ ຈຶ່ງທູນຖາມພຣະອົງວ່າ ພຣະບັນຍັດຂໍ້ໃດເປັນເອກ ເປັນໃຫຍ່ກວ່າຂໍ້ບັນຍັດທັງປວງ ພຣະເຢຊູຊົງຕອບວ່າ ພຣະບັນຍັດຂໍ້ເອກນັ້ນດັ່ງນີ້ ຊາວອິສຣາເອັນເອີຍ, ຈົ່ງຟັງເທີ້ນ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍຊົງເປັນພຣະເຈົ້າອົງດຽວ ແລະພວກເຈົ້າຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດຄວາມຄິດ, ແລະດ້ວຍສຸດກໍາລັງຂອງເຈົ້າ ພຣະບັນຍັດຂໍ້ທີສອງນັ້ນຄື ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ ພຣະບັນຍັດຂໍ້ອື່ນທີ່ໃຫຍ່ກວ່າພຣະບັນຍັດສອງຂໍ້ນີ້ກໍບໍ່ມີ

**- ຄວາມຮັກມາຈາກໃສ?**

**1ໂຢຮັນ 4:7-8**

ພວກທີ່ຮັກເອີຍ ຈົ່ງໃຫ້ເຮົາທັງຫລາຍຮັກເຊິ່ງກັນແລະກັນ ເພາະວ່າຄວາມຮັກມາຈາກພຣະເຈົ້າ ທຸກຄົນທີ່ຮັກກໍບັງເກີດມາຈາກພຣະເຈົ້າແລະຮູ້ຈັກພຣະເຈົ້າ ຜູ້ທີ່ບໍ່ຮັກກໍບໍ່ຮູ້ຈັກພຣະເຈົ້າ ເພາະວ່າພຣະເຈົ້າຊົງເປັນຄວາມຮັກ

1. ________________________________
2. ________________________________
3. ________________________________
4. ________________________________

**- ເປັນຫຍັງເຮົາຈຶ່ງຕ້ອງມີການນະມັດສະການແບບງ່າຍ?**

**ມາຣະໂກ 12:30**

ແລະພວກເຈົ້າຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດຄວາມຄິດ, ແລະດ້ວຍສຸດກໍາລັງຂອງເຈົ້າ

1. ______________________________
2. ______________________________
3. ______________________________
4. ______________________________

**- ການນະມັດສະການແບບງ່າຍຈະຕ້ອງໃຊ້ຄົນຈຳນວນເທົ່າໃດ?**

**ມັດທາຍ 18:20**

ດ້ວຍວ່າມີສອງຫລືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ ເຮົາກໍຢູ່ທ່າມກາງເຂົາບ່ອນນັ້ນແຫລະ

____________________________________

**ຂໍ້ພຣະຄຳພີທ່ອງຈຳ**

**ໂຢຮັນ 13:34-35**

ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍ ຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ ຖ້າເຈົ້າທັງຫລາຍມີຄວາມຮັກເຊິ່ງກັນແລະກັນ ດັ່ງນີ້ແຫລະ ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ

**ບົດຮຽນທີ 4**

**ການອະທິຖານ**

**ສັນລະເສີນ**

**ການອະທິຖານ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ລູກາ 4:33-35**

ໃນໂຮງທັມມະເທສນານັ້ນມີຄົນນຶ່ງມີຜີຖ່ອຍຮ້າຍເຂົ້າສິງຢູ່ແລະໄດ້ຮ້ອງສຽງດັງວ່າ ເຢຊູໄທນາຊາເຣັດເອີຍ ທ່ານມາຫຍຸ້ງກ່ຽວກັບພວກເຮົາເຮັດຫຍັງ ທ່ານມາທຳລາຍພວກເຮົາຫລື ທ່ານແມ່ນຜູ້ໃດພວກເຮົາກໍຮູ້ແລ້ວ ທ່ານຄືຜູ້ບໍລິສຸດຂອງພຣະເຈົ້າ ພຣະເຢຊູຊົງຫ້າມມັນວ່າ ມິດແມ ອອກຈາກຄົນນີ້ເສັຽ ແລະເມື່ອຜີໄດ້ເຮັດໃຫ້ຄົນນັ້ນລົ້ມລົງຖ້າມກາງປະຊາຊົນແລ້ວ ກໍອອກມາໂດຍບໍ່ໄດ້ເຮັດອັນຕະລາຍແກ່ຄົນນັ້ນແຕ່ຢ່າງໃດ

**- ສາມສິ່ງທີ່ຜູ້ຊອບທຳຄວນເຮັດມີຫຍັງແດ່?**

**ມັດທາຍ 21:12-16**

ເມື່ອນັ້ນພຣະເຢຊູໄດ້ສະເດັດເຂົ້າໄປໃນບໍຣິເວນພຣະວິຫານ ຊົງຂັບໄລ່ບັນດາຜູ້ຊື້ຂາຍໃນບໍລິເວນພຣະວິຫານນັ້ນອອກເສັຽ ແລະຂວ້ຳໂຕະຜູ້ແລກເງິນກັບທັງບ່ອນນັ່ງຂອງຜູ້ຂາຍນົກເຂົາເສັຽ ແລ້ວພຣະອົງຊົງບອກເຂົາວ່າ ມີຄຳຂຽນໄວ້ໃນພຣະຄຳພີວ່າ ວິຫານຂອງເຮົາ ເຮົາຈະເອີ້ນວ່າເປັນສະຖານທີ່ໄຫ້ວວອນ ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ເປັນ ຖ້ຳຂອງໂຈນ ພວກຄົນຕາບອດແລະຄົນຂາເສັ້ງກໍໄດ້ພາກັນມາຫາພຣະອົງໃນບໍລິເວນພຣະວິຫານ ພຣະອົງໄດ້ຊົງໂຜດໃຫ້ພວກເຂົາດີຫມົດ ແຕ່ເມື່ອພວກປະໂຣຫິດຕົນໃຫ່ຍແລະພວກນັກທັມໄດ້ເຫັນການອັສຈັນທີ່ພຣະອົງຊົງເຮັດນັ້ນ ທັງໄດ້ຍິນພວກເດັກນ້ອຍຮ້ອງຂຶ້ນໃນບໍລິເວນພຣະວິຫານວ່າ ໂຮຊັນນາ

ແກ່ພຣະຣາຊບຸດຂອງດາວິດເຂົາກໍ່ພາກັນເຄືອງໃຈ ເຂົາຈຶ່ງທູນຖາມພຣະອົງວ່າ ເຈົ້າບໍ່ໄດ້ຍິນຄຳທີ່ເຂົາຮ້ອງຢູ່ຫລື ພຣະເຢຊູຊົງຕອບວ່າ ໄດ້ຍິນແລ້ວ ພວກເຈົ້າບໍ່ໄດ້ອ່ານຈັກເທື່ອຫລືຄຳທີ່ວ່າ ພຣະອົງຊົງຈັດຄຳສັນລະເສີນອັນແທ້ຈິງອອກມາຈາກປາກຂອງເດັກນ້ອຍອ່ອນແລະຜູ້ທີ່ຍັງກິນນົມຢູ່

1. ຜູ້ຊອບທັມ____________________________
2. ຜູ້ຊອບທັມ____________________________
3. ຜູ້ຊອບທັມ____________________________

**- ເຮົາຄວນຈະອະທິຖານຢ່າງໃດ?**

**ລູກາ 10:21**

ໃນເວລາໂມງນັ້ນພຣະເຢຊູຊົງມີຄວາມຊື່ນຊົມຍິນດີດ້ວຍພຣະວິນຍານບໍລິສຸດຈຶ່ງຊົງກ່າວວ່າ ຂ້າແດ່ພຣະບິດາ ຜູ້ເປັນເຈົ້າຂອງສວັນແລະແຜ່ນດິນໂລກ ຂ້າພຣະອົງສັນລະເສີນພຣະອົງເພາະພຣະອົງຊົງໄດ້ປົກບັງສິ່ງເຫລົ່ານີ້ໄວ້ຈາກຜູ້ມີປັນຍາ ແລະຜູ້ສລາດແຕ່ໄດ້ຊົງສະແດງໃຫ້ພວກເດັກນ້ອຍຮູ້ ຂ້າແດ່ພຣະບິດາ ພຣະອົງຊົງເຫັນຊອບດັ່ງນັ້ນ

1. _____________________________________

**ລູກາ 18:13-14**

ຮ່ວນຄົນເກັບພາສີນັ້ນຢືນຢູ່ແຕ່ໄກ ບໍ່ຫານເງີຍຫນ້າເບິ່ງຟ້າ ແຕ່ຕີເອິກຂອງຕົນກ່າວວ່າ ຂ້າແດ່ພຣະເຈົ້າ ຂໍຊົງໂຜດເມດຕາແກ່ຂ້າພຣະອົງ ຜູ້ເປັນຄົນບາບແດ່ທ້ອນ ເຮົາບອກທ່ານທັງຫລາຍ ຄົນນີ້ແຫລະ ເມື່ອລົງກັບໄປຍັງເຮືອນຂອງຕົນ ກໍຊົງນັບວ່າຊອບທັມຫລາຍກວ່າຄົນອື່ນນັ້ນ ເພາະວ່າທຸກຄົນທີ່ຍົກຕົວຂຶ້ນຈະຖືກຖ່ອມລົງແຕ່ຜູ້ທີ່ໄດ້ຖ່ອມຕົວລົງຈະຖືກຍົກຂຶ້ນ

2. _____________________________________

**ລູກາ 11:9**

ຝ່າຍເຮົາ ເຮົາບອກພວກທ່ານວ່າ ຈົ່ງໝັ່ນຂໍແລ້ວຈະຊົງປະທານໃຫ້ ຈົ່ງໝັ່ນຊອກແລ້ວຈະພົບ ຈົ່ງໝັ່ນເຄາະແລ້ວຈະຊົງໄຂໃຫ້

3. _____________________________________

**ລູກາ 22:42**

ພຣະບິດາເອີຍ ຖ້າພໍພຣະທັຍຂໍໃຫ້ຈອກນີ້ເຄື່ອນຍ້າຍໄປຈາກລູກທ້ອນ ແຕ່ຢ່າງໃດກໍດີ ຂໍຢ່າໃຫ້ເປັນໄປຕາມຄວາມປາຖນາຂອງລູກ ແຕ່ໃຫ້ເປັນຕາມພຣະປະສົງຂອງພຣະອົງເທີນ

4. ________________________________________

**ອະທິຖານພ້ອມກັນ**

**- ພຣະເຈົ້າຊົງຕອບຄໍາອະທິຖານຂອງເຮົາຢ່າງໃດ?**

**ມັດທາຍ 20:20-22**

ຂນະນັ້ນມານດາຂອງລູກຊາຍເຊເບດາຍພາລູກທັງສອງຂອງຕົນມາຫາພຣະອົງຂາບໄຫວ້ທູນຂໍສິ່ງນຶ່ງຈາກພຣະອົງ ພຣະອົງຈຶ່ງຊົງຖາມນາງວ່າ ນາງປາຖນາສິ່ງໃດ ນາງທູນຕອບວ່າ ຂໍທ່ານຮັບສັ່ງໃຫ້ລູກຊາຍຂອງຂ້ານ້ອຍສອງຄົນນີ້ນັ່ງໃນອານາຈັກຂອງທ່ານ ເບື້ອງຂວາຜູ້ນຶ່ງ ເບື້ອງຊ້າຍຜູ້ນຶ່ງ ພຣະເຍຊູຊົງຕອບວ່າ ທີ່ພວກທ່ານຂໍນັ້ນພວກທ່ານບໍ່ເຂົ້າໃຈ ຈອກທີ່ເຮົາຈວນຈະດື່ມນັ້ນທ່ານຈະດື່ມໄດ້ຫລື ເຂົາທູນຕອບວ່າ ໄດ້ຢູ່ຂ້ານ້ອຍ

1.________________________________________

**ໂຢຮັນ 11:11-15**

ເມື່ອພຣະອົງຊົງກ່າວດັ່ງນີ້ແລ້ວກໍຊົງບອກພວກສາວົກວ່າ ລາຊະໂຣເພື່ອນຂອງເຮົາກໍຫລັບໄປແລ້ວ ແຕ່ເຮົາຈະໄປເພື່ອປຸກລາວໃຫ້ຕື່ນ ພວກສາວົກຈຶ່ງທູນພຣະອົງວ່າ ນາຍເຈົ້າເອີຍ ຖ້າຜູ້ປ່ວຍນອນຫລັບ ລາວກໍຄົງຈະດີປ່ວຍ ສ່ວນພຣະເຍຊູກໍໄດ້ຊົງກ່າວເຖິງການຕາຍຂອງລາຊະໂລ ແຕ່ພວກສາວົກຄຶດວ່າພຣະອົງຊົງກ່າວເຖິງການນອນຫລັບໃຫ້ຫາຍເມື່ອຍ ເຫດສັນນີ້ພຣະເຍຊູຈຶ່ງຊົງບອກເຂົາໂດມແຈ່ມແຈ້ງວ່າ ລາຊະໂລຕາຍແລ້ວ ເຮົາຍິນດີທີ່ເຮົາບໍ່ໄດ້ຢູ່ທີ່ນັ້ນເພາະເຫັນແກ່ທ່ານທັງຫລາຍ ເພື່ອທ່ານທັງຫລາຍຈະໄດ້ເຊື່ອ ພວກເຮົາພາກັນໄປຫາລາວເທະ

2.________________________________________

**ລູກາ 9:51-56**

ຄັນຈວນເວລາທີ່ພຣະອົງຈະຊົງຖືກຮັບຂຶ້ນເມືອນັ້ນ ພຣະອົງຊົງຕັ້ງພຣະທັຍແນ່ວແນ່ຈະໄປສູ່ກຸງເຢຣູຊາເລັມ ແລະພຣະອົງໄດ້ຊົງໃຊ້ພວກຜູ້ຮັບໃຊ້ໄປກ່ອນໜ້າພຣະອົງ ເມືອຜູ້ຮັບໃຊ້ນັ້ນໄປແລ້ວ ເຂົາກໍເຂົ້າໄປໃນບ້ານນຶ່ງຂອງຊາວຊາມາເຣັຽເພື່ອຈັດແຈງໄວ້ສໍາລັບພຣະອົງ ແຕ່ຊາວບ້ານນັ້ນບໍ່ໄດ້ຕ້ອນຮັບພຣະອົງ ເພາະ

ພຣະອົງຊົງຕັ້ງພຣະພັກຈະໄປສູ່ກຸງເຢລູຊາເລັມ ເມື່ອສາວົກຂອງພຣະອົງ ຄືຢາໂກ ໂບແລະໂຢຮັນ ໄດ້ເຫັນດັ່ງນັ້ນ ເຂົາຈຶ່ງທູນວ່າ ນາຍເອີຍ ທ່ານປະສົງຢາກໃຫ້ຂ້ານ້ອຍບອກໃຫ້ໄຟລົງມາຈາກຟ້າສວັນ ເພື່ອເຜົາຜານເຂົາເສັຽຫລື ແຕ່ພຣະອົງຊົງຫລຽວໄປຫ້າມປາມເຂົາທັງສອງ ແລະຊົງກ່າວວ່າ ທ່ານບໍ່ຮູ້ວ່າທ່ານມີຈິດໃຈແນວໃດ ເພາະວ່າບຸດມະນຸດບໍ່ໄດ້ມາເພື່ອທຳລາຍຊີວິດຂອງມະນຸດ ແຕ່ມາເພື່ອໂຜດໃຫ້ເຂົາພົ້ນ ແລະພຣະອົງໄດ້ສະເດັດໄປພ້ອມກັບສາວົກເຂົ້າໄປສູ່ບ້ານອື່ນ

3.______________________________________

**ໂຢຮັນ 15:7**

ຖ້າທ່ານທັງຫລາຍເຂົ້າສນິດຢູ່ໃນເຮົາ ແລະຖ້ອຍຄຳຂອງເຮົາຝັງຢູ່ໃນທ່ານແລ້ວ ພວກທ່ານຈະປາຖນາສິ່ງໃດຈົ່ງຂໍ ແລ້ວສິ່ງນັ້ນຈະເກີດມີແກ່ພວກທ່ານ

4.______________________________________

**ຂໍ້ພຣະຄຳທ່ອງຈຳ**

**ລູກາ 11:9**

ຝ່າຍເຮົາ ເຮົາບອກພວກທ່ານວ່າ ຈົ່ງໝັ່ນຂໍແລ້ວຈະຊົງປະທານໃຫ້ ຈົ່ງໝັ່ນຊອກແລ້ວຈະພົບ ຈົ່ງໝັ່ນເຄາະແລ້ວຈະຊົງໄຂໃຫ້

**ການອົບຮົມພາກປະຕິບັດ**

**ຈົບບົດຮຽນ**

**ເບີໂທລະສັບຂອງພຣະເຈົ້າ**

**ເຢເລມີຢາ 33:3**

ຈົ່ງຮ້ອງຫາເຮົາແລະເຮົາຈະຕອບເຈົ້າ ເຮົາຈະບອກໃຫ້ເຈົ້າຮູ້ເຖິງສິ່ງງຶດງໍ້ແລະພການອັສຈັນຕ່າງໆ ທີ່ເຈົ້າບໍ່ຮູ້

# ບົດຮຽນທີ 5

# ການເຊື່ອຟັງ

**ສັນລະເສີນ**

**ການອະທິຖານ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ມາຣະໂກ 10:45**

ເພາະບຸດມະນຸດນັ້ນບໍ່ໄດ້ມາເພື່ອໃຫ້ຄົນອື່ນປະຕິບັດຕົນ
ແຕ່ມາເພື່ອປະຕິບັດເຂົາ ແລະປະທານຊີວິດ
ຂອງຕົນໃຫ້ເປັນຄ່າໄຖຄົນຈຳນວນຫລາຍ

**- ສາມສິ່ງທີ່ຜູ້ຮັບໃຊ້ຄວນເຮັດມີຫຍັງແດ່?**

**ຟີລິບປອຍ 2:5-8**

ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ
ພຣະອົງຊົງສະພາບຂອງພຣະເຈົ້າ
ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນ ເປັນສິ່ງທີ່ຕ້ອງຍຶດຫວງໄວ້
ແຕ່ໄດ້ກັບຊົງຍອມສລະ ແລະຊົງຮັບສະພາບຂ້ອຍຂ້າ ຊົງຖືກຳເນີດເປັນມະນຸດ
ແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ
ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ
ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ

1.ຜູ້ຮັບໃຊ້______________________________
2.ຜູ້ຮັບໃຊ້______________________________
3.ຜູ້ຮັບໃຊ້______________________________

**- ໃຜມີສິດອຳນາດສູງສຸດໃນໂລກ?**

**ມັດທາຍ 28:18**

ພຣະເຢຊູຈຶ່ງສະເດັດມາໃກ້ແລ້ວຊົງກ່າວກັບເຂົາວ່າ
ອຳນາດທັງໝົດໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ

**- ຄຳສັ່ງສີ່ຢ່າງທີ່ພຣະເຢຊູຊົງໃຫ້ແກ່ຜູ້ເຊື່ອທຸກຄົນຄືຫຍັງ?**

**ມັດທາຍ 28:19-20ກ**

ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ
ໃຫ້ເຂົາຮັບບັບຕິສະມາໃນນາມແຫ່ງພຣະບິດາ, ພຣະບຸດ,
ແລະພຣະວິນຍານບໍລິສຸດ
ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ

1. ______________________________________
2. ______________________________________
3. ______________________________________
4. ______________________________________

**- ເຮົາຄວນເຊື່ອຟັງພຣະເຢຊູຢ່າງໃດ?**

1. ______________________________________
2. ______________________________________
3. ______________________________________

**- ພຣະເຢຊູຊົງສັນຍາສິ່ງໃດໄວ້ກັບຜູ້ເຊື່ອທຸກຄົນ?**

**ມັດທາຍ 28:20ຂ**

ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆວັນ ຈົນໝົດກັບ

**ຂໍ້ພຣະຄຳພີທ່ອງຈຳ**

**ໂຢຮັນ 15:10**

ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ
ເໝືອນດັ່ງເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ
ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ

ການອົບຮົມພາກປະຕິບັດ

ຈົບບົດຮຽນ

บົດຮຽນທີ 6

ການດຳເນີນຊີວິດ

ສັນລະເສີນ

ການອະທິຖານ

ການອົບຮົມພາກຄວາມຮູ້

ທົບທວນ

- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?

ມັດທາຍ 3:16-17

ຄັນພຣະອົງຊົງຮັບບັບຕິສະມາ ແລ້ວກໍສະເດັດຂຶ້ນມາຈາກນ້ຳທັນທີ
ແລ້ວເບິ່ງແມ ທ້ອງຟ້າກໍໄຂອອກ ແກ່ພຣະອົງ
ແລະພຣະອົງຊົງເຫັນພຣະວິນຍານຂອງພຣະເຈົ້າ
ເໝືອນດັ່ງນົກເຂົາສະເດັດລົງມາສະຖິດຢູ່ເທິງພຣະອົງ ແລະເບິ່ງແມ,
ມີພຣະສຸຣະສຽງຈາກຟ້າສວັນຊົງກ່າວວ່າ ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ
ເຮົາຊອບໃຈຫລາຍໃນທ່ານ

**- ສາມສິ່ງທີ່ພຣະບຸດຄວນເຮັດມີຫຍັງແດ່?**

**ໂຢຮັນ 17:4, 18-19**

ຂ້ານ້ອຍໄດ້ຖວາຍກຽດຕິຍົດແດ່ພຣະອົງໃນໂລກ
ຂ້ານ້ອຍໄດເຮັດກິຈການທີ່ພຣະອົງ ຊົງໃຫ້ຂ້າເຮັດນັ້ນສຳເຣັດແລ້ວ
ພຣະອົງຊົງໃຊ້ຂ້ານ້ອຍລົງມາໃນໂລກສັນໃດ ຂ້ານ້ອຍກໍໃຊ້ເຂົາໄປໃນໂລກສັນນັ້ນ
ຂ້ານ້ອຍຊຳຣະຕົວຖວາຍເພາະເຫັນແກ່ເຂົາ
ເພື່ອໃຫ້ເຂົາຮັບການຊົງຊຳຣະແຕ່ງຕັ້ງໄວ້ດ້ວຍຄວາມຈິງເໝືອນກັນ

1. ພຣະບຸດ________________________________
2. ພຣະບຸດ________________________________
3. ພຣະບຸດ________________________________

**- ເປັນຫຍັງພຣະຣາຊກິດຂອງພຣະເຢຊູຈຶ່ງປະສົບຄວາມສຳເຣັດ?**

**ລູກາ 4:14**

ແລ້ວພຣະເຢຊູໄດ້ສະເດັດກັບຄືນແຂວງຄາລິເລດ້ວຍຣິດແຫ່ງພຣະວິນຍານ
ແລະກິຕິສັບຂອງພຣະອົງໄດ້ຊ່າລືໄປທົ່ວອ້ອມເຂດນັ້ນ

---

**ພຣະເຢຊູຊົງສັນຍາສິ່ງໃດຕໍ່ຜູ້ເຊື່ອກ່ຽວກັບພຣະວິນຍານບໍລິສຸດກ່ອນທີ່ຈະຖືກຄຶງທີ່ ກາງແຂນ?**

**ໂຢຮັນ 14:16-18**

ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຂໍ້ບັນຍັດຂອງເຮົາ ຝ່າຍເຮົາຈະທູນຂໍພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ອຍອີກຜູ້ນຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານ ຕລອດໄປເປັນນິດ ຄືພຣະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກ ບໍ່ເຫັນແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດ ຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ ເຮົາຈະບໍ່ປະຖິ້ມທ່ານທັງຫລາຍໄວ້ໃຫ້ ເປັນກຳພ້າ ເຮົາຈະມາຫາພວກທ່ານ

1. ________________________________________
2. ________________________________________
3. ________________________________________
4. ________________________________________

-

**ພຣະເຢຊູຊົງສັນຍາສິ່ງໃດຕໍ່ຜູ້ເຊື່ອກ່ຽວກັບພຣະວິນຍານບໍລິສຸດຫລັງຈາກທີ່ຊົງເປັນຄືນ ມາຈາກຄວາມຕາຍ?**

**ກິຈການ 1:8**

ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍລິສຸດຈະສະ  ເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພຍານຝ່າຍເຮົາໃນກຸງເຢຣູຊາເລັມ ຕລອດແຂວງຢູດາຍ, ກັບແຂວງຊາມາເຣັຽ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ

____________________________________________

**- ຄໍາສັ່ງສີ່ຢ່າງທີ່ໃຫ້ເຮົາເຊື່ອຟັງກ່ຽວກັບພຣະວິນຍານບໍລິສຸດ?**

ແຕ່ເຮົາຂໍບອກວ່າ ຈົ່ງຍອມໃຫ້ພຣະວິນຍານບໍລິສຸດເປັນຜູ້ຊົງນໍາພາ ແລະເຈົ້າທັງ ຫລາຍຈະບໍ່ເຮັດຕາມຕັນຫາຂອງມະນຸດ

1. ________________________________________

**ເອເຟໂຊ 4:30**

ແລະຢ່າເຮັດໃຫ້ພຣະວິນຍານບໍລິສຸດຂອງພຣະເຈົ້າເສັຽພຣະທັຍ ເພາະໂດຍພຣະວິນ ຍານນັ້ນທ່ານທັງຫລາຍໄດ້ຖືກຊົງປະທັບຕາຫມາຍໄວ້ ເພື່ອວັນທີ່ຈະຊົງໄຖ່ໃຫ້ພົ້ນ

2. ________________________________________

**ເອເຟໂຊ 5:18**

ແລະຢ່າເມົາເຫລົ້າແວງ ຊຶ່ງພາໃຫ້ເສັຽຄົນ ແຕ່ຈົ່ງເຕັມໄປດ້ວຍພຣະວິນຍານກໍດີກວ່າ

3. ________________________________________

**1 ເທຊະໂລນິກ 5:19**

ຢ່າຫັກຫ້າມພຣະວິນຍານ

4. ________________________________________

**ຂໍ້ພຣະຄໍາພີທ່ອງຈໍາ**

**ໂຢຮັນ 7:38**

ຜູ້ທີ່ວາງໃຈໃນເຮົາແມ່ນ້ໍາອັນມີຊີວິດຈະໄຫລອອກຈາກພາຍໃນຜູ້ນັ້ນ ຕາມທີ່ພຣະຄໍາພີກ່າວໄວ້ແລ້ວ

**ການອົບຮົມພາກປະຕິບັດ**

**ຈົບບົດຮຽນ**

**- ພຣະເຢຊູຊົງຢູ່ທີ່ນີ້**

**ເຮັບເຣີ 13:8**

ພຣະເຢຊູຄຣິດຊົງເປັນຢູ່ສເມີທັງໃນເວລາວານນີ້, ໃນເວລາວັນນີ້, ແລະສືບໆໄປເປັນ ນິດ

**ມັດທາຍ 15:30-31**

ແລະມີປະຊາຊົນຈຳນວນຫລາຍມາຫາພຣະອົງ ເຂົາພາຄົນຂາເສັ້ງ, ຄົນຕາບອດ, ຄົນແຂນຂາພິການ, ຄົນປາກກືກ, ແລະຄົນເຈັບອື່ນໆຫລາຍຄົນ ມາວາງໄວ້ແທບພຣະບາດຂອງພຣະເຢຊູ ແລ້ວພຣະອົງຊົງໂຜດໃຫ້ເຂົາດີ ຈົນຝູງຄົນເຫລົ່ານັ້ນງຶດອັສຈັນໃຈ ເມື່ອເຫັນຄົນປາກກືກປາກໄດ້, ຄົນແຂນຂາພິການດີປົກກະຕິ, ຄົນຂາເສັ້ງ ຍ່າງໄປໄດ້, ແລະຄົນຕາບອດເຫັນໄດ້ ແລ້ວເຂົາຈຶ່ງສັຣເສີນພຣະເຈົ້າຂອງຊາດ ອິສຣາເອັນ

**ໂຢຮັນ 10:10**

ຂະໂມຍມາກໍພຽງແຕ່ຈະລັກ, ຈະຂ້າ, ແລະທຳລາຍເທົ່ານັ້ນ ຝ່າຍເຮົາໄດ້ມາເພື່ອເຂົາ ຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍຣິບູນ

## ບົດຮຽນທີ 7

## ການອອກໄປ

**ສັນລະເສີນ**

**ການອະທິຖານ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ລູກາ 19:10**

ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາ
ແລະໂຜດເອົາຜູ້ທີ່ຫລົງເສັຽໄປແລ້ວນັ້ນໃຫ້ ລອດພົ້ນ

**ມາຣະໂກ 1:37-38**

ເມື່ອພົບແລ້ວເຂົາຈຶ່ງທູນວ່າ ຄົນທັງຫລາຍກໍຊອກຫາທ່ານຢູ່
ພຣະອົງຊົງຕອບເຂົາວ່າ ໃຫ້ເຮົາທັງຫລາຍໄປໃນເຂດບ້ານເມືອງໃກ້ຄຽງ
ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ ເພາະເຫດການນີ້ແຫລະ ເຮົາຈຶ່ງໄດ້ອອກມາ

1. ຜູ້ສະແຫວງຫາ___________________________
2. ຜູ້ສະແຫວງຫາ___________________________
3. ຜູ້ສະແຫວງຫາ___________________________

**- ພຣະເຢຊູມີເກນໃນການຕັດສິນໃຈຢ່າງໃດວ່າຈະໄປຮັບໃຊ້ບ່ອນໃດ?**

**ໂຢຮັນ 5:19-20**

ພຣະເຢຊູຊົງກ່າວກັບເຂົາວ່າ ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າພຣະ
ບຸດຈະກະທຳສິ່ງໃດຕາມໃຈບໍ່ໄດ້ ນອກຈາກທີ່ໄດ້ເຫັນພຣະບິດາຊົງກະທຳ
ເພາະສິ່ງ ໃດທີ່ພຣະບິດາຊົງກະທຳ ສິ່ງນັ້ນແຫລະ
ພຣະບຸດຈຶ່ງຊົງກະທຳເໝືອນກັນ ເພາະວ່າພຣະບິດາຊົງຮັກພຣະບຸດ

ແລະຊົງສະແດງໃຫ້ພຣະບຸດເຫັນທຸກສິ່ງທີ່ ພຣະອົງເອງຊົງກະທຳ ແລ້ວພຣະອົງຈະຊົງສະແດງໃຫ້ພຣະບຸດເຫັນການໃຫ່ຍກວ່າ ນັ້ນອີກ ຊຶ່ງທ່ານທັງຫລາຍຈະອັສຈັນໃຈ

1. ________________________________________
2. ________________________________________
3. ________________________________________
4. ________________________________________

**- ເຮົາຈະມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?**

**1 ໂຢຮັນ 2:5-6**

ແຕ່ຜູ້ໃດຖືຮັກສາພຣະທັມຂອງພຣະອົງ ຜູ້ນັ້ນແຫລະ ເປັນຜູ້ທີ່ຮັກພຣະເຈົ້າຢ່າງ ຄົບຖ້ວນ ດ້ວຍອາການຢ່າງນີ້ແຫລະ ເຮົາທັງຫລາຍຈຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ ຜູ້ໃດເວົ້າວ່າຕົນຢູ່ໃນພຣະອົງ ຜູ້ນັ້ນກໍຄວນດຳເນີນຊີວິດຕາມທາງທີ່ພຣະຄຣິດຊົງ ດຳເນີນນັ້ນເໝືອນກັນ

1. ________________________________________
2. ________________________________________
3. ________________________________________
4. ________________________________________

**- ພຣະເຢຊູຊົງກຳລັງທຳງານທີ່ໃດ?**

**ລູກາ 4:18-19**

ພຣະວິນຍານແຫ່ງອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຂ້າພຣະເຈົ້າ ເພາະວ່າພຣະອົງ ໄດ້ຫົດສົງຕັ້ງຂ້າພຣະເຈົ້າໄວ້ ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ ພຣະອົງໄດ້ຊົງ ໃຊ້ຂ້າພຣະເຈົ້າປະກາດອິສຣະພາບແກ່ບັນດາຊະເລີຍ ໃຫ້ປະກາດແກ່ຄົນຕາບອດວ່າ ຈະໄດ້ເຫັນຮຸ່ງອີກ ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິສຣະແລະໃຫ້ປະກາດປີແຫ່ງອົງພຣະ

ຜູ້ເປັນເຈົ້າຈະຊົງເມດຕານັ້ນ

1. ________________________________________
2. ________________________________________
3. ________________________________________

4. ________________________________________

**- ອີກທີ່ນຶ່ງທີ່ພຣະເຢຊູຊົງກຳລັງທຳງານຢູ່ຄືທີ່ໃດ?**

✓ ວິນຍານຊົ່ວ - ຊາຍທີ່ຖືກວິນຍານຊົ່ວເຂົ້າສິງ - ມາຣະໂກ 5

✓ ໂກເນລີໂອ - ກິຈການ 10

✓ ນາຍຄຸກທີ່ເມືອງຟີລິບປອຍ - ກິຈການ 16

**ຂໍ້ພຣະຄຳພີທ່ອງຈຳ**

**ໂຢຮັນ 12:26**

ຖ້າຜູ້ໃດປະຕິບັດເຮົາ ໃຫ້ຜູ້ນັ້ນຕິດຕາມເຮົາມາ ແລະເຮົາຢູ່ທີ່ໃດ ຜູ້ປະຕິບັດເຮົາຈະຢູ່ ທີ່ນັ້ນເໝືອນກັນ ຖ້າຜູ້ໃດປະຕິບັດເຮົາ ພຣະບິດາຈະຊົງປະທານກຽດຕິຍົດແກ່ຜູ້ນັ້ນ

## ບົດຮຽນທີ 8

## ການແບ່ງປັນ

**ສັນລະເສີນ**

**ການອະທິຖານ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ມັດທາຍ 26:53**

ທ່ານຄຶດວ່າເຮົາຈະຂໍຄວາມຊ່ອຍເຫລືອຈາກພຣະບິດາຂອງເຮົາບໍ່ໄດ້ຫລື ແລະໃນທັນທີ ພຣະອົງຈະໃຊ້ເທວະດາມາຫາເຮົາກວ່າສິບສອງກອງ

**- ສາມສິ່ງທີ່ທະຫານຄວນເຮັດມີຫຍັງແດ່?**

**ມາຣະໂກ 1:12-15**

ໃນທັນໃດນັ້ນພຣະວິນຍານໄດ້ຊົງບັງຄັບພຣະອົງໃຫ້ສະເດັດເຂົ້າໄປໃນປ່າກັນດານ
ທີ່ນັ້ນຊາຕານໄດ້ທົດລອງພຣະອົງເຖິງສີ່ສິບວັນ ພຣະອົງຊົງຢູ່ຖ້າມກາງສັດປ່າ
ແລະ ມີພວກເທວະດາມາບົວລະບັດພຣະອົງ ຄັນໂຢຮັນຖືກຈັບແລ້ວ
ພຣະເຢຊູໄດ້ສະເດັດໄປ  ຍັງແຂວງຄາລິເລ ຊົງປະກາດຂ່າວປະເສີດເຣື່ອງພຣະເຈົ້າ
ແລະຊົງບອກວ່າ ເວລາກຳ
ນົດມາເຖິງແລ້ວຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ
ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະເຊື່ອໃນຂ່າວປະເສີດ

1. ທະຫານ________________________________
2. ທະຫານ________________________________
3. ທະຫານ________________________________

**- ເຮົາປາບຊາຕານໃຫ້ພ່າຍແພ້ໄດ້ຢ່າງໃດ?**

**ພຣະນິມິດ 12:11**

ເຂົາເຫລົ່ານັ້ນໄດ້ຊະນະພຍານາກດ້ວຍພຣະໂລຫິດຂອງພຣະເມສານ້ອຍ
ແລະເພາະຄຳພຍານຂອງເຂົາເອງ
ເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່ເສັຽດາຍຊີວິດ

1. ________________________________
2. ________________________________
3. ________________________________

**- ຄຳພຍານທີ່ເຕັມໄປດ້ວຍລິດອຳນາດຄືຫຍັງ?**

1. ________________________________
2. ________________________________
3. ________________________________
4. ________________________________

**- ເນື້ອຫາພຣະກິຕິຄຸນແບບງ່າຍຄືຫຍັງ?**

1. ________________________________
2. ________________________________
3. ________________________________

4. ________________________________________

- ແມ່ນຫຍັງຄືແນວທາງທີ່ສຳຄັນຕໍ່ການປະຕິບັດຕາມ?

1. ________________________________________
2. ________________________________________
3. ________________________________________
4. ________________________________________

**ພຣະຄຳພີທ່ອງຈຳ**

**1 ໂກຣິນໂທ 15:3-4**

ເຣື່ອງທີ່ເຮົາໄດ້ຮັບໄວ້ແລ້ວນັ້ນ
ເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍເປັນເຣື່ອງສຳຄັນທີ່ ສຸດຄືວ່າ
ພຣະຄຣິດຊົງວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງຫລາຍຕາມທີ່ຂຽນ
ໄວ້ໃນພຣະຄຳພີ ແລະຊົງຖືກວາງໄວ້
ແລ້ວວັນຖ້ວນສາມໄດ້ຖືກຊົງບັນດານໃຫ້ຄືນຂຶ້ນ ມາ
ຕາມທີ່ຂຽນໄວ້ໃນພຣະຄຳພີນັ້ນ

**ການອົບຮົມພາກປະຕິບັດ**

**ຈົບບົດຮຽນ**

## ບົດຮຽນທີ 9
## ການທຳຕາມແບບຢ່າງ

**ສັນລະເສີນ**

**ການອະທິຖານ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**



**ມັດທາຍ 13:36-37**

ແລ້ວພຣະເຢຊູໄດ້ສະເດັດໄປຈາກຄົນເຫລົ່ານັ້ນເຂົ້າໄປໃນເຮືອນ ພວກສາວົກມາເຝົ້າ ພຣະອົງທູນວ່າ ຂໍທ່ານໂຜດອະທິບາຍໃຫ້ພວກຂ້ານ້ອຍເຂົ້າໃຈຄຳອຸປມາເຣື່ອງນົກເຂົາ ໃນນານັ້ນແດ່ ພຣະອົງຊົງຕອບເຂົາວ່າ ຜູ້ຫວ່ານເມັດດີນັ້ນຄືບຸດມະນຸດ

**- ສາມສິ່ງທີ່ຜູ້ຫວ່ານຄວນເຮັດມີຫຍັງແດ່?**

**ມາຣະໂກ 4:26-29**

ພຣະອົງຊົງກ່າວວ່າ ຣາຊອານາຈັກຂອງພຣະເຈົ້າປຽບເໝືອນຄົນນຶ່ງທີ່ຫວ່ານກ້າລົງ ໃນດິນ ແລ້ວກາງຄືນກໍນອນຫລັບ ກາງເວັນກໍຕື່ນຂຶ້ນ ຝ່າບກ້ານັ້ນມັນງອກຈະເຣີນຂຶ້ນ ຢ່າງໃດລາວກໍບໍ່ຮູ້ຈັກ ເພາະຂີ້ດິນເອງເຮັດໃຫ້ເກີດຜົນຄື ເປັນລຳຕົ້ນກ່ອນ ແລ້ວພາຍ ຫລັງກໍອອກຮວງ ແລ້ວກໍມີເມັດເຕັມຮວງ ຄັນສຸກແລ້ວລາວກໍໃຊ້ຄົນໄປເກັບກ່ຽວທັນທີ ເພາະວ່າເຖິງຣະດູກ່ຽວແລ້ວ

1. ຜູ້ຫວ່ານ______________________________
2. ຜູ້ຫວ່ານ______________________________
3. ຜູ້ຫວ່ານ______________________________

**- ສີ່ຮູບແບບທີ່ຜູ້ຄົນຕອບສະໜອງຕໍ່ການຝຶກອົບຮົມຄືຫຍັງ?**

**ມັດທາຍ 13:3-9**

ແລ້ວພຣະອົງຊົງກ່າວກັບເຂົາຫລາຍປະການເປັນຄຳອຸປມາວ່າ ເບິ່ງແມ ມີຄົນນຶ່ງ ອອກໄປຫວ່ານພືດ ເມື່ອກຳລັງຫວ່ານຢູ່ນັ້ນລາງເມັດກໍຕົກຕາມທາງ ແລ້ວນົກກໍມາກິນ ເສັງ. ລາງເມັດກໍຕົກໃສ່ບ່ອນຫີນຫລາຍດິນໜ້ອຍ ຈຶ່ງງອກຂຶ້ນໂລດເພາະດິນບໍ່ເລິກ ແຕ່ເມື່ອຕາເວັນອອກກໍແຫ້ມ ຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ ລາງເມັດກໍຕົກຕາມພຸ່ມ ໜາມ

ໜາມກໍບົ່ງຂື້ນຫຸ້ມຮັດເສັງ ລາງເມັດກໍຕົກໃສ່ດິນດີແລ້ວກໍເກີດຜົນ ເມັດນື່ງຮ້ອຍຕໍ່, ເມັດນື່ງຫົກສິບຕໍ່, ເມັດນື່ງສສາມສິບຕໍ່, ຜູ້ໃດມີຫູ ຈົ່ງຟັງເອົາ

1. ______________________________________
2. ______________________________________
3. ______________________________________
4. ______________________________________

**- ສິ່ງສຽງທີ່ບອກໃຫ້ເຮົາຫວ່ານພຣະກິຕິຄຸນມີຫຍັງແດ່?**

**ມາຣະໂກ 16:15**

ຝ່າຍພຣະອົງຊົງສັ່ງພວກສາວົກວ່າ ທ່ານທັງຫລາຍຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸສໂລກທັງໝົດ

1. ______________________________________

**ລູກາ 16:27-28**

ເສດຖີນັ້ນຈິ່ງເວົ້າວ່າ ບິດາເອີຍ ຖ້າຢ່າງນັ້ນ
ຂໍທ່ານໃຊ້ລາຊະໂລໄປຍັງເຮືອນພໍ່ຂອງ ຂ້ານ້ອຍ
ເພາະວ່າຂ້ານ້ອຍມີອ້າຍນ້ອງຫ້າຄົນ ເພື່ອໃຫ້ລາຊະໂລໄປຕັກເຕືອນເຂົາ
ເພາະຢ້ານວ່າເຂົາຈະເຂົ້າມາໃນບ່ອນທໍຣະມານນີ້ເໝືອນກັນ

2. ______________________________________

**1 ໂກຣິນໂທ 9:16**

ເພາະການທີ່ເຮົາປະກາດຂ່າວປະເສີດນັ້ນ ເຮົາບໍ່ມີເຫດຜົນທີ່ຈະອວດອ້າງໄດ້
ເພາະຄວາມຈຳເປັນໄດ້ຕົກໃສ່ເຮົາ
ວິບັດຈະເກີດມີແກ່ເຮົາຖ້າເຮົາບໍ່ປະກາດຂ່າວປະ ເສີດ

3. ______________________________________

**ກິຈການ 16:9**

ໃນກາງຄືນໂປໂລໄດ້ເຫັນນິມິດ ມີຊາຍຊາວມາເກໂດເນັຽຄົນນຶ່ງຢືນຢູ່ອ້ອນວອນວ່າ ຂໍຂ້າມມາເຖິງເມືອງມາເກໂດເນັຽພີ້ ເພື່ອຊ່ອຍພວກຂ້ານ້ອຍແດ່ທ້ອນ

4. ________________________________

**ຂໍ້ພຣະຄຳພີທ່ອງຈຳ**

**ລູກາ 8:15**

ເມັດທີ່ຕົກໃສ່ດິນດີນັ້ນໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມດ້ວຍໃຈເຫລື້ອມໃສສັດທາ ແລ້ວກໍຈົດຈຳໄວ້ ຈຶ່ງເກີດຜົນໂດຍຄວາມພຽນ

**ການອົບຮົມພາກປະຕິບັດ**

**ຈົບບົດຮຽນ**

**ບົດຮຽນທີ 10**

**ການແບກກາງແຂນ**

**ການອົບຮົມພາກຄວາມຮູ້**

**ທົບທວນ**

**- ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**

**ລູກາ 9:23**

ແລ້ວພຣະອົງຊົງກ່າວກັບຄົນທັງຫລາຍວ່າ ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດ ຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ

**- ກິຈການ ບົດທີ 29 ຢູ່ທີ່ໃດ?**

**ການນຳສະເໜີ**

**ອະທິຖານເພື່ອແຜນທີ່ ກິຈການ ບົດທີ 29**

**ການອະທິຖານເພື່ອການອຸທິດຕົນ**